ສະພາບລວມມົນລະພິດທາງອາກາດ ແລະ ບັນຫາໝອກຄວັນ ລະດູແລ້ງ ຂອງແຂວງວຽງຈັນ

I. ສະພາບລວມ ແຂວງວຽງຈັນ

ແຂວງວຽງຈັນ ເປັນແຂວງໜຶ່ງທີ່ມີຊັບພະຍາກອນທຳມະຊາດ ທີ່ອຸດົມສົມບູນ ກາຍເປັນທ່າແຮງພື້ນຖານ ແລະ ມີບົດບາດສຳຄັນ ຕໍ່ການພັດທະນາເສດທະກິດ-ສັງຄົມ ຂອງແຂວງ. ໃນປັດຈຸບັນ ໄດ້ມີຫຼາຍໂຄງການເກີດຂຶ້ນ ແລະ ກຳລັງຈັດຕັ້ງປະຕິບັດໂດຍສະເພາະໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ໂຄງການພັດທະນາອຸດສາຫະກຳ, ໂຄງການຜະລິດກະສິກຳ ທີ່ກໍ່ໃຫ້ເກີດມົນລະພິດທາງອາກາດເຊັ່ນ: ຝຸ່ນລະອອງ, ໝອກຄວັນ, ກິ່ນເໝັນ ທີ່ອາດສ້າງຄວາມລຳຄານ ແລະ ສິ່ງຜົນກະທົບຕໍ່ສຸຂະພາບຂອງປະຊາຊົນ.

❖ **ແຂວງວຽງຈັນ ແມ່ນໄດ້ຮັບເຄື່ອງວັດແທກຄຸນນະພາບອາກາດທັງໝົດ 4 ເຄື່ອງ ເພື່ອໃຊ້ໃນການຕິດ ຕາມຄຸນນະພາບອາກາດ ດັ່ງນີ້:**

1. ເຄື່ອງເຊັນເຊີວັດແທກຄຸນນະພາບອາກາດ Outdoor Air Quality Monitor PAS-OA320-3G ຈຳນວນ 2 ເຄື່ອງ ຕິດຕັ້ງຢູ່ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ 1 ເຄື່ອງ ແລະ ຕິດຕັ້ງຢູ່ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງວັງວຽງ 1 ເຄື່ອງ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການສິ່ງແວດລ້ອມໂລກ (Global Environment Cemter ຫຼື GEC).

2. ເຄື່ອງວັດແທກຄຸນນະພາບອາກາດ IES-200 Air Quality Monitor ຈຳນວນ 1 ເຄື່ອງ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການອະນາໄມໂລກ (WHO) ເຊິ່ງມີແຜນຈະໄປຕິດຕັ້ງເຄື່ອງຢູ່ເມືອງຊະນະຄາມ.

3. ກຳລັງຈະໄດ້ຮັບເຄື່ອງວັດແທກຄຸນນະພາບອາກາດ ອີກ 1 ເຄື່ອງ ຈະຕິດຕັ້ງຢູ່ເມືອງວັງວຽງ ໂດຍການຊ່ວຍເຫຼືອຈາກລັດຖະບານ ສາທາລະນະລັດເກົາຫຼີ ພາຍໃຕ້ໂຄງການອາກາດສະອາດເພື່ອຄວາມຍືນຍົງຂອງອາຊ່ຽນ (Clean Air for Sustainable ASEAN Project)

II. ບັນຫາ ແລະ ສາເຫດ ທີ່ກໍ່ໃຫ້ເກີດມົນລະພິດທາງອາກາດ

ບັນຫາມົນລະພິດທາງອາກາດ ທີ່ເກີດຂຶ້ນຫຼັກໆ ແມ່ນບັນຫາໝອກຄວັນໄຟໄໝ້ປ່າ ຈາກການບຸກເບີກພື້ນທີ່ທຳການຜະລິດກະສິກຳຂອງປະຊາຊົນ ເປັນຕົ້ນແມ່ນຈຸດປ່າເຮັດໄຮ່, ປູກສວນຢາງ, ສວນມັນຕົ້ນ ເຂດເທິງພູ. ໃນໄລຍະປີຜ່ານມາ ແຂວງວຽງຈັນ ໄດ້ເກີດມີໄຟໄໝ້ລາມປ່າ ໃນຊ່ວງເດືອນມີນາ ຫາ ເດືອນພຶດສະພາ 2023 ລວມທັງໝົດ 40 ຈຸດ ພາຍໃນ 10 ເມືອງ (ຍົກເວັ້ນເມືອງວຽງຄຳ) ມີເນື້ອທີ່ຜືນເສຍຫາຍປະມານ 5.932 ເຮັກຕາ (ຂໍ້ມູນຈາກໜັງສືລາຍງານ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ ສະບັບເລກທີ 1051/ກປຂ, ລົງວັນທີ 15 ພຶດສະພາ 2023).

ນອກຈາກນີ້, ກໍ່ຍັງມີບັນຫາມົນລະພິດທາງອາກາດ ກໍ່ຄື ຝຸ່ນລະອອງ ທີ່ເກີດຈາກການຂຸດຄົ້ນ-ປຸງແຕ່ງແຮ່ທາດ ເປັນຕົ້ນແມ່ນ ໂຄງການຂຸດຄົ້ນຄຳ, ຂຸດຄົ້ນຫີນປູນ, ຂຸດຄົ້ນຖ່ານຫີນ, ຂຸດຄົ້ນຫີນ-ຊາຍ ແລະ ຝຸ່ນຄວັນຈາກການດຳເນີນໂຮງງານອຸດສາຫະກຳເຊັ່ນ ໂຮງງານຜະລິດຊີມັງ ລວມທັງການຂົນສົ່ງວັດຖຸການຜະລິດ ແລະ ສົ່ງຈຳໜ່າຍສິນຄ້າຜ່ານເສັ້ນທາງດິນແດງ, ຄວັນຈາກພາຫະນະ, ຄວັນຈາກໂຮງງານຜະລິດເມັດຢາງປລາສຕິກ ທີ່ມີກິ່ນຂີ ກະທົບຕໍ່ພະນັກງານ-ກຳມະກອນ ໃນເວລາດຳເນີນການຜະລິດ, ກິ່ນເໝັນຈາກຟາມລ້ຽງໝູ, ຟາມລ້ຽງໄກ່ ແລະ ກິ່ນເໝັນຈາກໂຮງງານປຸງແຕ່ງ ແລະ ເວລາຂົນສົ່ງຢາງພາລາ ແລະ ອື່ນໆ.

III. ມາດຕະການປ້ອງ, ຫຼຸດຜ່ອນ ແລະ ແກ້ໄຂ ມົນລະພິດທາງອາກາດ

- **ມາດຕະການປ້ອງກັນສຳລັບບັນຫາໝອກຄວັນຈາກໄຟໄໝ້ລາມປ່າ:**

- ມີຂໍ້ຕົກລົງ ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບ ໃນການດຳເນີນການແກ້ໄຂ ບັນຫາບຸກລຸກທຳລາຍຊັບພະຍາ ກອນປ່າໄມ້ ແລະ ຈັບຈອງທີ່ດິນປ່າໄມ້, ຕ້ານສະກັດກັ້ນໄຟໄໝ້ລາມປ່າ ໃນ 11 ເມືອງ ທີ່ຂຶ້ນກັບແຂວງວຽງຈັນ ສະບັບເລກທີ 90/ຈຂ.ວຈ ລົງວັນທີ 17 ມັງກອນ 2024 (ໂດຍມີຫຼາຍພາກສ່ວນກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນເມືອງ) ເພື່ອເປັນການຜັນຂະຫຍາຍຄຳສັ່ງຂອງທ່ານນາຍົກ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023 ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ກ່ຽວກັບ ວຽກງານປົກປັກຮັກສາ, ປົກປ້ອງຄຸ້ມຄອງ, ນຳໃຊ້ຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້ ໃຫ້ສອດຄ່ອງຕາມຫຼັກວິຊາການ, ນຳໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມລະບຽບຫຼັກການ ແລະ ກົດໝາຍ.

- ພະແນກກະສິກຳ ແລະ ປ່າໄມ້ແຂວງ ໂດຍສະເພາະ ຂະແໜງປ່າໄມ້, ກອງຄຸ້ມຄອງປ່າສະຫງວນ-ປ່າປ້ອງກັນ, ກອງກວດກາປ່າໄມ້ ລົງສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ບ້ານ, ກອງຄຸ້ມຄອງປ່າສະຫງວນຂອງກະຊວງປ້ອງກັນປະເທດ ເພື່ອຕິດຕາມ, ເຝົ້າລະວັງ, ປ້ອງກັນ ແລະ ສະກັດກັ້ນຈຸດທີ່ມີຄວາມສ່ຽງ ທີ່ຈະເກີດໄຟໄໝ້ປ່າໃນແຕ່ລະໄລຍະ.

- ແຕ່ລະເມືອງມີລະບຽບໃນການຄຸ້ມຄອງໄຟໄໝ້ລາມປ່າ ແລະ ມີມາດຕະການຕໍ່ຜູ້ລະເມີດ ໂດຍຈະມີການສຶກສາອົບຮົມ, ຫັດແທນຄ່າເສຍຫາຍ, ປັບໃໝ ຕາມແຕ່ລະກໍລະນີ.

III. ມາດຕະການປ້ອງ, ຫຼຸດຜ່ອນ ແລະ ແກ້ໄຂ ມົນລະພິດທາງອາກາດ (ຕໍ່)

- **ມາດຕະການປ້ອງກັນສຳລັບຝຸ່ນລະອອງ ແລະ ຄວັນ ຈາກໂຄງການພັດທະນາ:**

ການດຳເນີນໂຄງການ ຫຼື ກິດຈະການຕ່າງໆພາຍໃນແຂວງວຽງຈັນ ແມ່ນຕ້ອງໄດ້ດຳເນີນຂະບວນການປະເມີນຜົນກະ ທົບຕໍ່ສິ່ງແວດລ້ອມແບບລະອຽດ (EIA) ສຳລັບກິດຈະການຂະໜາດໃຫຍ່ ຂັ້ນກະຊວງຮັບຜິດຊອບ, ດຳເນີນຂະບວນການສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ (IEE) ສຳລັບກິດຈະການຂະໜາດກາງ ຂັ້ນແຂວງຮັບຜິດຊອບ ແລະ ສ້າງແຜນການຄຸ້ມຄອງສິ່ງແວດລ້ອມ (EMP) ສຳລັບທຸລະກິດຄອບຄົວ ຂັ້ນເມືອງຮັບຜິດຊອບ. ເຊິ່ງການດຳເນີນໂຄງການ ຫຼື ກິດຈະການຕ່າງໆ ຕ້ອງປະຕິບັດຕາມແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ທີ່ໄດ້ລະບຸມາດຕະການປ້ອງກັນ, ຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ກຊສ, ພຊສ ແຂວງ, ຫຊ້ສ ເມືອງ ໄດ້ມີການລົງຕິດຕາມກວດກາໂຄງການ ຫຼື ກິດຈະການຕ່າງໆ ເປັນປົກກະຕິ ແລະ ກໍລະນີມີເຫດສຸກເສີນ.

IV. ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ

- ການເກັບກຳຂໍ້ມູນກ່ຽວກັບພື້ນທີ່ໄຟໄໝ້ປ່າ ອາດຍັງບໍ່ທັນຊັດເຈນ.

ຄວາມຮູ້, ຄວາມສາມາດ ຂອງບຸກຄະລາກອນ ດ້ານການຕິດຕາມ ກວດກາຄຸນນະພາບອາກາດ ແມ່ນຍັງມີໜ້ອຍ ບໍ່ທັນເລິງເຊິ່ງ.

- ຂາດງົບປະມານ ໃນການເຄື່ອນໄຫວ, ຊຸກຍູ້ ແລະ ເຜີຍແຜ່ນິຕິກຳຕ່າງໆທີ່ກ່ຽວຂ້ອງ ເພື່ອຊ່ວຍປ້ອງກັນ, ຫຼຸດຜ່ອນ ແລະ ແກ້ໄຂບັນຫາຜົນກະທົບຈາກໄຟໄໝ້ປ່າ ແລະ ບັນຫາໝອກຄວັນ.

- ການດຳເນີນໂຄງການພາຍໃນແຂວງວຽງຈັນເຫັນວ່າ ບາງໂຄງການຍັງບໍ່ທັນເອົາໃຈໃສ່ປະຕິບັດຕາມມາດຕະການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ລະບຸໄວ້ໃນແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ໄດ້ດີເທົ່າທີ່ຄວນ.

- ແຂວງວຽງຈັນ ຍັງບໍ່ມີເຄື່ອງມືວັດແທກຄຸນນະພາບອາກາດ ທີ່ສາມາດກວດວັດຄ່າລະດັບຄວາມເຂັ້ມຂຸ້ນຂອງທາດເຄມີໃນຊັ້ນອາກາດ ຈາກການດຳເນີນກິດຈະການແຕ່ລະປະເພດ, ຂະໜາດ, ຊະນິດ ແຫຼ່ງທີ່ມາຂອງມົນລະພິດ ແລະ ທາດມົນລະພິດ ຈາກແຫຼ່ງກຳເນີນມົນລະພິດ. ໃນກໍລະນີຫາກເກີດມີເກດການສຸກເສີນ ທີ່ປ່ອຍມົນລະພິດທາງອາກາດ ກໍບໍ່ສາມາດວັດຄ່າໄດ້ທັນເຫດການ.

V. ຂໍ້ສະເໜີ

1. ສະເໜີໃຫ້ມີຜູ້ຊ່ຽວຊານສະເພາະດ້ານ ມາຝຶກສອນການນຳໃຊ້ດາວທຽມ ໃນການຕິດຕາມຄຸນນະພາບອາກາດ ແບບລະອຽດ ແລະ ຝຶກອົບຮົມຄວາມຮູ້ທີ່ສຳຄັນ ກ່ຽວກັບວຽກງານດັ່ງກ່າວ ໃຫ້ບຸກຄະລາກອນ ພາຍໃນພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ ລວມທັງຂະແໜງການກ່ຽວຂ້ອງອື່ນ ເພື່ອພັດທະນາຄວາມຮູ້ ໃຫ້ສາມາດນຳໃຊ້ເຂົ້າໃນວຽກງານຕົວຈິງ ກໍ່ຄື ການຕິດຕາມຄຸນນະພາບອາກາດ.

2. ສະເໜີໃຫ້ມີງົບປະມານ ທີ່ເປັນບູລິມະສິດ ໃນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ການຕິດຕາມ ກວດສອບຄຸນນະພາບອາກາດ, ການຝຶກອົບຮົມ ແລະ ເຜີຍແຜ່ນິຕິກຳກ່ຽວຂ້ອງ , ການສະໜອງພາຫະນະ ແລະ ອຸປະກອນໃນການຊ່ວຍດັບໄຟລາມປ່າ.

3. ຖ້າຫາກມີທຶນຊ່ວຍເຫຼືອຕ່າງໆ ໃນການສະໜອງເຄື່ອງວັດແທກຄຸນນະພາບອາກາດ ທີ່ສາມາດກວດວັດຄ່າລະດັບຄວາມເຂັ້ມຂຸ້ນຂອງທາດເຄມີໃນຊັ້ນອາກາດ ກໍ່ສະເໜີຂໍ 1 ເຄື່ອງ ມານຳໃຊ້ຢູ່ໃນແຂວງວຽງຈັນ.

ขอบใจ